ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ
Lao-China Securities Public Company

ເລກທີ 553 /ບລຈ

ນະຄອນຫຼວງວຽງຈັນ, ວັນທີ 18 SEP 2026

ມະຕິ

ກອງປະຊຸມສະພາບໍລິຫານ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ

ສະໄໝສາມັນ ຄັ້ງທີ III ປະຈຳປີ 2026

- ອີງຕາມ ກົດລະບຽບ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ ສະບັບເລກທີ 001/ບລຈ, ລົງວັນທີ 15 ຕຸລາ 2025.

ຜ່ານການສັງລວມຕາຕະລາງຄຳເຫັນເຊັນໝຸນວຽນ ຂອງບັນດາສະມາຊິກສະພາບໍລິຫານຕໍ່ກັບແຕ່ລະວາລະ ຂອງກອງປະຊຸມສະພາບໍລິຫານ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ (ບລຈ) ສະໄໝສາມັນ ຄັ້ງທີ III ປະຈຳປີ 2026 (ດັ່ງເອກະສານຄັດຕິດ), ປະກອບມີລາຍຊື່ບັນດາສະມາຊິກສະພາບໍລິຫານ ດັ່ງນີ້:

1. ທ່ານ ໝູໄຊ ພູມສຸວັນ, ປະທານສະພາບໍລິຫານ;
2. ທ່ານ ລີ ຊາງເຫວີຍ, ຮອງປະທານສະພາບໍລິຫານ;
3. ທ່ານ ໂຈ ຄຸນ, ສະມາຊິກສະພາບໍລິຫານ;
4. ທ່ານ ຈາງ ຫົງບິນ, ສະມາຊິກສະພາບໍລິຫານ;
5. ທ່ານ ສົມພິງ ບໍລິບຸດ, ສະມາຊິກສະພາບໍລິຫານ;
6. ທ່ານ ຫວາງ ເວີຍ, ສະມາຊິກສະພາບໍລິຫານ;
7. ທ່ານ ຮສ. ປອ. ໄຊພອນ ກອງມະນີລາ, ສະມາຊິກອິດສະລະ;
8. ທ່ານ ປອ. ເຈຍ ຮຸຍ, ສະມາຊິກອິດສະລະ;
9. ທ່ານ ນະ ຈັນຕະລີວົງ, ສະມາຊິກອິດສະລະ.

ກອງປະຊຸມສະພາບໍລິຫານ ບລຈ ສະໄໝສາມັນ ຄັ້ງທີ III ປະຈຳປີ 2026 ຕົກລົງ

ມາດຕາ 1 ພາຍຫຼັງພິຈາລະນາແລ້ວ, ໄດ້ເຫັນດີຮັບຮອງເປັນເອກະພາບໃນກອງປະຊຸມສະພາບໍລິຫານ ບລຈ ສະໄໝສາມັນ ຄັ້ງທີ III ປະຈຳປີ 2026, ລາຍລະອຽດ ດັ່ງລຸ່ມນີ້:

1. ເຫັນດີຮັບຮອງ ບົດລາຍງານການເງິນ 6 ເດືອນຕົ້ນປີ 2026 ຂອງ ບລຈ;

2. ເຫັນດີຮັບຮອງ ການແຕ່ງຕັ້ງຄະນະກອງເລຂານຸການສະພາບໍລິຫານ ບລຈ.

ມາດຕາ 2 ການຈັດຕັ້ງປະຕິບັດ

ມອບໃຫ້ ຄະນະອຳນວຍການ ບລຈ ຈັດຕັ້ງປະຕິບັດຕາມມະຕິກອງປະຊຸມສະບັບນີ້ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນຢ່າງຕັ້ງໜ້າ ໃຫ້ໄດ້ຮັບປະສິດທິຜົນ.

ມາດຕາ 3 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນທີ່ ບັນດາສະມາຊິກສະພາບໍລິຫານລົງລາຍເຊັນໃນຕາຕະລາງຄຳເຫັນເຊັນໝູນວຽນຂອງກອງປະຊຸມສະພາບໍລິຫານ ບລຈ ສະໄໝສາມັນ ຄັ້ງທີ III ປະຈຳປີ 2026 ແລະ ທ່ານປະທານສະພາບໍລິຫານລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາບໍລິຫານ

ໝູໄຊ ພຸມສຸວັນ